**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

======= 000 =======

ແຂວງຊຽງຂວາງ

ສຳນັກງານປົກຄອງແຂວງ

ເລກທີ ໐໒ / ຈຂ.ຊຂ

ວັນທີ ໒໒ / ໒ / 2016

# ຄຳສັ່ງແນະນຳ

## ວ່າດ້ວຍການ ສະກັດກັ້ນ ແລະ ຫ້າມຕັດປ້ຳ, ຈູດປ່າ ໄມ້, ໄຟໄໝ້ລາມ ຫຼັງຈາກປ່າໄມ້ໄດ້ຮັບຜົນກະທົບຈາກໄພໜາວ

**ເຖິງ:** ບັນດາທ່ານ ເຈົ້າເມືອງ, ພະແນກການ, ກົມກອງ, ອົງການຈັດຕັ້ງສາກົນຕ່າງໆ, ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ແລະ ທຸລະກິດຮ້າງຮ້ານຕ່າງໆທົ່ວແຂວງຊຽງຂວາງ.

- ອີງຕາມ: ກົດໝາຍວ່າດ້ວຍປ່າໄມ້ສະບັບເລກທີ 06/ສພຊ, ລົງວັນທີ 24/12/2007.
- ອີງຕາມ: ໜັງສືສະເໜີຂອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ ສະບັບເລກທີ 0171/ກປຂ, ລົງ

ວັນທີ 15/2/2016.

ໃນເດືອນຜ່ານມານີ້ ແຂວງຊຽງຂວາງ ພວກເຮົາກໍ່ເປັນແຂວງໜຶ່ງທີ່ໄດ້ຮັບຜົນກະທົບຈາກອາກາດໜາວ ເຊິ່ງໄດ້ສ້າງຜົນເສຍຫາຍໃນຫຼາຍດ້ານຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນ, ຕະຫຼອດຮອດປ່າໄມ້ທຳມະຊາດ, ປ່າປູກ ແລະ ສວນປູກພືດຕ່າງໆ ກໍ່ລ້ວນແຕ່ໄດ້ຮັບຜົນກະທົບຈາກນ້ຳໝອກກ້າມ(ຫິມະ) ໂດຍສະເພາະແມ່ນຂອບເຂດເມືອງໜອງແຮດ, ຈູດພູສາມສຸມ ເມືອງຄູນ ແລະ ເຂດອື່ນໆທີ່ມີຕົ້ນໄມ້ຕາຍເປັນຈຳນວນຫຼວງຫຼາຍ.

ຕໍ່ກັບບັນຫາດັ່ງກ່າວນີ້ ເພື່ອເປັນການປົກປັກຮັກສາ ແລະ ສະກັດກັ້ນບໍ່ໃຫ້ມີການຕັດປ້ຳ, ຈູດທຳລາຍປ່າໄມ້ທີ່ມີໃບແຫ້ງຕາຍຈາກອາກາດໜາວ, ສະນັ້ນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດການຄຸ້ມຄອງຊັບພະຍາກອນປ່າໄມ້ປະຈຳສົກປີ 2015 - 2016 ນີ້ໃຫ້ເຂັ້ມງວດ ແລະ ມີປະສິດຕິພາບສູງ.

### ເຈົ້າ ແຂວງ ແຂວງຊຽງຂວາງ ອອກຄຳສັ່ງແນະນຳ ດັ່ງນີ້:

1. ມອບໃຫ້ ພະແນກກະສິກຳ ແລະ ປ່າໄມ້ແຂວງ(ຂະແໜງປ່າໄມ້), ບັນດາ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ພະແນກຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ເປັນເຈົ້າການໃນການຫ້າມ ແລະ ສະກັດກັ້ນ ປະກົດການຫຍໍ້ທໍ້ ທີ່ອາດເກີດຂຶ້ນຈາກຄວາມຮູ້ເທົ່າບໍ່ເຖິງການຂອງປະຊາຊົນ ແລະ ການສວຍໃຊ້ສ່ອງຫວ່າງແອບອ້າງຂອງບຸກຄົນ ຫຼື ຜູ້ປະກອບການເພື່ອຕັດປ້ຳໄມ້, ຈູດປ່າໄມ້ທີ່ມີໃບໄມ້ຕາຍຈາກອາກາດໜາວ, ດ້ວຍການຈັດຕັ້ງປະຕິບັດເຜີຍແຜ່ເຊື່ອມຊຶມໃຫ້ແກ່ພະນັກງານ, ທະຫານ, ຕຳຫຼວດ, ຜູ້ປະກອບການ ແລະ ປະຊາຊົນບັນດາເຜົ່າໄດ້ເຊື່ອມຊຶມຢ່າງທົ່ວເຖິງ ແລະ ເປັນເຈົ້າການດ້ານເຕັກນິກ ສ້າງແລວປ້ອງກັນໄຟປ່າຕາມຂອບເຂດເນື້ອທີ່ສ່ຽງຕໍ່ໄຟໄໝ້ລາມປ່າ ເພື່ອເປັນການປ້ອງກັນໄຟປ່າໃຫ້ທ່ວງທັນກັບເວລາ.

2. ບໍ່ວ່າກໍລະນີໃດໆກໍ່ຕາມ ຫ້າມບໍ່ໃຫ້ຫົວໜ່ວຍທຸລະກິດໄມ້, ໂຮງງານປຸງແຕ່ງໄມ້, ບຸກຄົນ ຫຼື ພາກສ່ວນໃດຕັດປ້ຳໄມ້ ແລະ ຈູດປ່າໄມ້ທີ່ມີໃບຕາຍແຫ້ງຈາກອາກາດໜາວໃນເດືອນຜ່ານມາໂດຍສະເພາະ ເມືອງໜອງແຮດ, ເມືອງໝອກ, ເມືອງຄູນ ແລະ ເມືອງອື່ນໆ ຈະແມ່ນຢູ່ປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ, ປ່າຊົມໃຊ້ຂອງບ້ານ ແລະ ປ່າອື່ນໆກໍ່ຕາມ ແມ່ນຫ້າມຕັດປ້ຳ ແລະ ທຳການຈູດຢ່າງເດັດຂາດ.

3. ມອບໃຫ້ບັນດາທ່ານ ເຈົ້າເມືອງ ໃນແຕ່ລະເມືອງເປັນໃຈກາງໃນການຊີ້ນຳ, ນຳພາ ແລະ ປຸກລະດົມທຸກພາກສ່ວນກ່ຽວຂ້ອງຕະຫຼອດຮອດປະຊາຊົນພາຍໃນເມືອງ, ວາງແຜນຄຸ້ມຄອງ ແລະ ກຳນົດລະບຽບ, ມາດຕະການໃນການສະກັດກັ້ນ ການບຸກລຸກປ່າດ້ວຍທຸກຮູບແບບເຊັ່ນ: ການແອບອ້າງເງື່ອນໄຂຕົ້ນໄມ້ຕາຍຢືນເພື່ອຂໍໂກ່ນໄມ້ຈາກລັດ, ລັກລອບຂຸດຄົ້ນໄມ້, ຖາງປ່າເຮັດໄຮ່, ບຸກເບີກເນື້ອທີ່ທຳການຜະລິດ.

4. ສຳລັບເຂດທຳການຜະລິດຂອງປະຊາຊົນ ແມ່ນໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ສົມທົບກັບອຳນາດການປົກຄອງແຕ່ລະເມືອງ, ພະນັກງານລົງກໍ່ສ້າງຮາກຖານໃນແຕ່ລະທ້ອງຖິ່ນຈັດສັນ ແລະ ກຳນົດເນື້ອທີ່ສະເພາະ ແລະ ເໝາະສົມເພື່ອປ້ອງກັນບໍ່ໃຫ້ມີການບຸກລຸກປ່າໄມ້ເຊັ່ນ: ປ່າສະຫງວນ, ປ່າປ້ອງກັນແຫຼ່ງນ້ຳ, ຍອດນ້ຳແຫຼ່ງນ້ຳ ແລະ ເຂດປ້ອງກັນການເຊາະເຈື່ອນ, ສຳລັບເຂດທີ່ໄດ້ຮັບອະນຸຍາດບຸກເບີກເປັນເນື້ອທີ່ປູກພືດຕ່າງໆ ເວລາຈູດທຸກຄັ້ງຕ້ອງສ້າງແລວກັນໄຟອ້ອມຮອບເນື້ອທີ່ໃຫ້ມີຄວາມກ້ວາງ 6-10 ແມັດ.

5. ສຳລັບການທຳມາຫາກິນຂອງປະຊາຊົນບັນດາເຜົ່າແຕ່ລະທ້ອງຖິ່ນໃນທົ່ວແຂວງຊຽງຂວາງຕ້ອງຮັບປະກັນບໍ່ໃຫ້ມີເຫດການທຳລາຍປ່າໄມ້, ຈູດປ່າ ແລະ ໄຟໄໝ້ລາມປ່າອັນເປັນຜົນເສຍຫາຍອັນໃຫຍ່ຫຼວງຕໍ່ປ່າໄມ້ ແລະ ສິ່ງແວດລ້ອມ.

6. ມອບ ໃຫ້ອຳນາດການປົກຄອງເມືອງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງເປັນເຈົ້າການໃນການປຸກລະດົມຈຳນວນຜົນເພື່ອດັບມອດໄຟໄໝ້ລາມປ່າ ໃນເມື່ອມີເຫດການໄຟໄໝ້ປ່າ ແລະ ໄຟໄມ້ລາມປ່າເກີດຂຶ້ນຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນເອງ.

7. ມອບໃຫ້ກອງບັນຊາການປ້ອງກັນຄວາມສະຫງົບແຂວງກຽມພ້ອມພາຫະນະ ແລະ ອຸປະກອນດັບໄຟໃນກໍລະນີມີການຂໍຄວາມຊ່ວຍເຫຼືອດັບມອດໄຟໄໝ້ຈາກພາກສ່ວນກ່ຽວຂ້ອງ ແລະ ທ້ອງຖິ່ນ.

8. ປະຊາຊົນ, ນັກທ່ອງທ່ຽວ ພາຍໃນ ແລະ ຕ່າງປະເທດ ທີ່ໄປທຳມາຫາກິນ ແລະ ທ່ອງທ່ຽວທຳມະຊາດຕ່າງໆ ທຸກຄັ້ງຕ້ອງມີສະຕິ, ມີຄວາມຮັບຜິດຊອບ ຮັບປະກັນບໍ່ໃຫ້ມີໄຟໄໝ້ລາມປ່າຈາກການກະທຳຂອງຕົນຢ່າງເດັດຂາດ, ຖ້າຫາກເກີດມີໄຟໄໝ້ລາມປ່າຕ້ອງພ້ອມກັນດັບມອດ.

9. ມອບໃຫ້ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງຊີ້ນຳຂະແໜງການ, ເຈົ້າໜ້າທີ່ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນເອົາໃຈໃສ່ເປັນເຈົ້າການໃນການລາດຕະເວນ, ກວດກາປ່າໄມ້ເພື່ອປ້ອງກັນ ແລະ ສະກັດກັ້ນການບຸກລຸກປ່າໄມ້ດ້ວຍທຸກຮູບແບບ ແລະ ປະກົດການຈູດປ່າກໍ່ໃຫ້ເກີດມີການໄໝ້ປ່າຢ່າງເຂັ້ມງວດ, ພ້ອມສົມທົບກັບອຳນາດການປົກຄອງທ້ອງຖິ່ນຈັດຕັ້ງປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານດີໃນການປົກປັກຮັກສາປ່າໄມ້ ແລະ ດຳເນີນຄະດີກັບຜູ້ທີ່ກະທຳຜິດຕາມລະບຽບກົດໝາຍ.

10. ກໍລະນີ ຖ້າຫາກມີບຸກຄົນ ພະນັກງານ, ທະຫານ, ຕຳຫຼວດ, ຜູ້ປະກອບການ ແລະ ປະຊາຊົນບໍ່ປະຕິບັດຄຳສັ່ງແນະນຳສະບັບນີ້ ແມ່ນຈະໄດ້ດຳເນີນຄະດີຄືຕາມລະບຽບກົດໝາຍຢ່າງເຂັ້ມງວດ.

11. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ, ແຂວງຊຽງຂວາງ

ດຣ. ຄຳປາວ
Dr. Khampao